# ການປ່ຽນແປງສຳລັບບຸກຄົນທີ່ຖືກລົງໂທດໃນຄວາມຜິດຮ້າຍແຮງດ້ານຢາເສບຕິດມາກ່ອນ:

ນັບແຕ່ວັນທີ 1 ເມສາ 2015, ທາງໂຄງການ CalWORKs ແລະ CalFresh ຈະອະນຸຍາດໃຫ້ຜູ້ທີ່ຖືກພິພາກສາລົງໂທດໃນຄວາມຜິດຮ້າຍແຮງດ້ານຢາເສບຕິດສາມາດຮັບຜົນປະໂຫຍດການຊ່ວຍເຫຼືອໄດ້. ນີ້ໝາຍຄວາມວ່າ ຜູ້ທີ່ໄດ້ຖືກປະຕິເສດ ຫຼື ເສັຽຜົນປະໂຫຍດ ເນື່ອງຈາກການຖືກລົງໂທດອາດຮັບເອົາຜົນປະໂຫຍດການຊ່ວຍເຫຼືອໄດ້ຕື່ມ. ພໍ່ແມ່ຈະຖືກຕື່ມເຂົ້າໃນໜ່ວຍການຊ່ວຍເຫຼືອ (Assistance Unit, AU) ຂອງ CalWORKs ໂດຍອັດຕະໂນມັດ. ທາງຄາວຕີ້ຈະບອກ ໃຫ້ທ່ານຮູ້ວ່າ ເຂົາເຈົ້າຕ້ອງການຂໍ້ມູນເພີ່ມເຕີມຫຼືບໍ່ເພື່ອ ດຳເນີນການໃຫ້ບຸກຄົນນີ້ໄດ້ຮັບຜົນປະໂຫຍດການຊ່ວຍເຫຼືອ.

ພໍ່ນ້າຫຼືແມ່ນ້າທີ່ເຄີຍເປັນບຸກຄົນສຳຮອງ ແລະຍັງບໍ່ຢູ່ໃນ AU ຂອງທ່ານ ກໍອາດຖືກເພີ່ມເຂົ້າໄດ້ແຕ່ທ່ານຈະຕ້ອງຕິດຕໍ່ທາງຄາວຕີ້ ຖ້າວ່າທ່ານຕ້ອງການຜົນປະໂຫຍດການຊ່ວຍເຫຼືອສຳລັບພໍ່ນ້າຫຼືແມ່ນ້າ ຫຼື ສຳລັບຄູ່ຄອງທີ່ຈົດທະບຽນແລ້ວ.

ມັນກໍຄືກັນກັບຄົນອື່ນໆ ທີ່ຮັບເອົາ CalWORKs ແລະ CalFresh, ຜູ້ທີ່ຖືກລົງໂທດຮ້າຍແຮງດ້ານຢາເສບຕິດ ຊຶ່ງເປັນຜູ້ທີ່ຢູ່ໃນລະຫວ່າງການຖືກຕິດຕາມເບິ່ງຄວາມປະພຶດ ຫຼື ຖືກປ່ອຍຕົວອອກຈາກຄຸກໂດຍມີເງື່ອນໄຂດ້ານການປະພຶດ ຕ້ອງປະຕິບັດຕາມກົດລະບຽບຂອງການຄວບຄຸມຄວາມປະພຶດ, ລວມເຖິງ ແຜນການປິ່ນປົວການຕິດຢາເສບຕິດທີ່ໄດ້ຮັບອະນຸມັດແລ້ວ, ຖ້າວ່າ ມັນແມ່ນສ່ວນໜຶ່ງໃນລະຫວ່າງໄລຍະການຖືກຄວບຄຸມຄວາມປະພຶດ.

**ທ່ານຈະໄດ້ຮັບແຈ້ງການປະຕິບັດໃນເດືອນມີນາທີ່ສະແດງ ຈຳນວນຜົນປະໂຫຍດໃໝ່ຂອງທ່ານ ຊຶ່ງເລີ້ມຕົ້ນໃນວັນທີ 1 ເມສາ.**

---

## ການປ່ຽນແປງ CalFresh:

ການເພີ່ມບຸກຄົນເຂົ້າໃນຄົວເຮືອນ CalFresh ນັ້ນ ໂດຍທົ່ວໄປແລ້ວ ແມ່ນໃຫ້ປະໂຫຍດດ້ານອາຫານຂອງທ່ານຫຼາຍຂຶ້ນ. ຖ້າວ່າ ບຸກຄົນນັ້ນຍັງຖືກເພີ່ມເຂົ້າໃນ CalWORKs ອີກ, ການຊ່ວຍເຫຼືອດ້ານເງິນສົດກໍຈະເພີ່ມຂຶ້ນດ້ວຍ, ຜົນປະໂຫຍດ CalFresh ອາດຫຼຸດລົງ. **ທ່ານຈະໄດ້ຮັບແຈ້ງການອີກສະບັບໜຶ່ງ ຖ້າວ່າ ຜົນປະໂຫຍດ CalFresh ຂອງທ່ານປ່ຽນແປງ.**

---

## Welfare-to-Work:

ການເພີ່ມຜູ້ໃຫຍ່ເຂົ້າໃນ CalWORKs ອາດປ່ຽນແປງຂໍ້ກຳນົດເລື້ອງວຽກສຳລັບຄອບຄົວ. ຜູ້ໃຫຍ່ທີ່ຮັບການຊ່ວຍເຫຼືອນັ້ນຕ້ອງເຮັດວຽກ ຫຼື ເຮັດກິດຈະກຳຕ່າງໆ ທີ່ອາດຊ່ວຍໃຫ້ມີວຽກເຮັດງານທຳ. ບາງຄົນອາດໄດ້ຮັບອະນຸຍາດ (ຖືກຍົກເວັ້ນ) ຈາກຂໍ້ກຳນົດດ້ານວຽກ. ຄົນທີ່ຖືກລົງໂທດໃນຄວາມຜິດຮ້າຍແຮງດ້ານຢາເສບຕິດມາກ່ອນຊຶ່ງຖືກເພີ່ມເຂົ້າໃນ AU ຂອງທ່ານທີ່ເລີ້ມຕົ້ນວັນທີ 1 ເມສາ 2015 ນັ້ນກໍອາດຖືກຮຽກຮ້ອງໃຫ້ເຮັດຕາມໂຄງການ Welfare-to-Work (WTW). ຜູ້ທີ່ບໍ່ຖືກຮຽກຮ້ອງໃຫ້ເຮັດຕາມໂຄງການ WTW ກໍອາດເປັນອາສາສະໝັກໄດ້.

ໂຄງການ WTW ສາມາດໃຫ້ການສຶກສາ, ການຝຶກອົບຮົມ, ແລະຄວາມຊຳນານດ້ານວຽກແກ່ທ່ານ ເພື່ອຊ່ວຍທ່ານໃນການຊອກຫາວຽກ. ນອກຈາກນີ້ ທາງຄາວຕີ້ກໍຈະຊ່ວຍທ່ານຈັດການ ແລະຈ່າຍຄ່າຝາກເບິ່ງແຍງເດັກ. ທ່ານຍັງຈະໄດ້ຮັບຄ່າເດີນທາງ ແລະຄ່າໃຊ້ຈ່າຍອື່ນໆ, ເຊັ່ນ ຄ່າເຄື່ອງມືພິເສດ ຫຼື ຄ່າເສື້ອຜ້າ, ທ່ານຈະຕ້ອງໄດ້ວຽກ ຫຼື ເຮັດຕາມໂຄງການ WTW ຂອງທ່ານ. ຖ້າຫາກ ຄອບຄົວຂອງທ່ານຕົກຢູ່ໃນພາວະວິກິດ, ເຊັ່ນ ບໍ່ມີເຮືອນຢູ່ ຫຼື ມີບັນຫາຄອບຄົວຕ່າງໆ, ທາງ CalWORKs ຍັງອາດສາມາດໃຫ້ບໍລິການພິເສດແກ່ທ່ານໄດ້.

ຖ້າວ່າ ທ່ານຖືກຮຽກຮ້ອງໃຫ້ເຮັດ WTW, ແລະບໍ່ເຮັດຕາມວຽກທີ່ມອບໝາຍໃຫ້ທ່ານ, ການຊ່ວຍເຫຼືອດ້ານ ເງິນສົດຂອງທ່ານກໍອາດຖືກຫຼຸດລົງ. ທາງຄາວຕີ້ຈະສົ່ງ ຂໍ້ມູນໃຫ້ທ່ານຕື່ມກ່ຽວກັບຂໍ້ກຳນົດດ້ານວຽກຂອງ CalWORKs. ນອກຈາກນີ້ ເຂົາເຈົ້າຈະສົ່ງຟອມໃຫ້ທ່ານເພື່ອຂໍໃຫ້ມີການຍົກເວັ້ນຈາກຂໍ້ກຳນົດຂອງ WTW.

---

## ການເບິ່ງແຍງເດັກ:

ຜູ້ໃຫຍ່ທີ່ໄດ້ຮັບການຊ່ວຍເຫຼືອຈາກ CalWORKs ອາດໄດ້ຮັບບໍລິການຊ່ວຍເຫຼືອດ້ານການຝາກເບິ່ງແຍງເດັກ ຖ້າວ່າ ເຂົາເຈົ້າພວມເຮັດວຽກ ຫຼື ເຮັດກິດຈະກຳທີ່ WTW ອະນຸມັດ. ຖ້າວ່າ ປັດຈຸບັນລູກຂອງທ່ານກຳລັງຮັບບໍລິການເບິ່ງແຍງເດັກ ແລະທ່ານກໍເລີ່ມຮັບການຊ່ວຍເຫຼືອຂອງ CalWORKs, ທ່ານກໍບໍ່ຈຳເປັນຕ້ອງປ່ຽນຜູ້ໃຫ້ບໍລິການຮັບຝາກເດັກ, ໂດຍສະເພາະ ຖ້າວ່າ ຜູ້ໃຫ້ບໍລິການຂອງທ່ານຈະຍອມຮັບການຈ່າຍເງິນຄ່າຝາກເດັກຈາກ CalWORKs.

**ຕິດຕໍ່ທາງຄາວຕີ້ເພື່ອປຶກສາຫາລືກ່ຽວກັບການໃຫ້ບໍລິການ ຮັບຝາກເດັກ ຊຶ່ງທ່ານອາດມີສິດໄດ້ຮັບ.**

---

## ເງິນຄ່າລ້ຽງດູລູກ:

ຜູ້ໃຫຍ່ທີ່ຮັບເອົາ CalWORKs ຕ້ອງຮ່ວມມືໃນການເກັບເງິນຄ່າລ້ຽງດູລູກສຳລັບເດັກທີ່ຢູ່ໃນໂຄງການ CalWORKs. ເງິນຄ່າລ້ຽງດູລູກທີ່ເກັບໄດ້ນັ້ນຕ້ອງຖືກຈ່າຍຄືນໃຫ້ແກ່ທາງຄາວຕີ້. ນັ້ນໝາຍຄວາມວ່າ ເມື່ອເລື້ອງຂອງທ່ານຖືກໂອນຍ້າຍໄປທີ່ພະແນກບໍລິການດ້ານຄ່າລ້ຽງດູລູກ ທ່ານກໍຈະໄດ້ຮັບສູງສຸດພຽງ $50 ຕໍ່ເດືອນສຳລັບເງິນຄ່າລ້ຽງດູລູກ. ເງິນ $50 ຈະບໍ່ຖືກນັບໃສ່ຈຳນວນເງິນຊ່ວຍເຫຼືອຂອງທ່ານ. ເງິນສ່ວນຍັງເຫຼືອຂອງເງິນຄ່າລ້ຽງດູລູກຂອງທ່ານແມ່ນຖືກນຳໃຊ້ເພື່ອຈ່າຍຄືນ ສຳລັບການຊ່ວຍເຫຼືອດ້ານເງິນສົດຂອງທ່ານ.

**ຕິດຕໍ່ຄາວຕີ້ ຖ້າວ່າ ທ່ານມີຄຳຖາມກ່ຽວກັບການປ່ຽນແປງ ຕ່າງໆ ດ້ານຄ່າລ້ຽງດູລູກຂອງທ່ານ ຫຼື ຖ້າວ່າ ຄອບຄົວຂອງທ່ານຈະຕົກຢູ່ໃນຄວາມສ່ຽງ ຖ້າວ່າ ມີການເກັບເອົາ ຄ່າລ້ຽງດູລູກຂອງທ່ານ.**